ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===0000===---

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0116./ກປ.07

ນະຄອນຫລວງວຽງຈັນ, ວັນທີ 17 MAY 2007

# ຂໍ້ຕົກລົງ

# ຂອງລັດຖະມົນຕີ

## ວ່າດ້ວຍ ລະບຽບການວັດແທກ ໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ

- ອີງຕາມ ກົດໝາຍປ່າໄມ້ .
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ 31/ນຍ, ລົງວັນທີ 23 ສິງຫາ 2006 ກ່ຽວກັບ ການເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງປ່າໄມ້, ການທຸລະກິດໄມ້ ແລະ ສົ່ງເສີມ ອຸດສາຫະກຳປຸງແຕ່ງໄມ້ ເປັນຜະລິດຕະພັນສຳເລັດຮູບ

ຈາກການສະຫຼຸບ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດ ຂໍ້ກຳນົດ ສະບັບເລກທີ 0060/ກປ.03, ລົງວັນທີ 24 ກຸມພາ 2003 ວ່າດ້ວຍ ຂະໜາດວັດຮອບ ອະນຸຍາດຕັດຟັນ ໄມ້ຢືນຕົ້ນ ຈາກປ່າທຳມະຊາດ, ການວັດແທກ ແລະ ຈັດຊັ້ນຄຸນນະພາບ ໄມ້ທ່ອນພາຍໃນ ແລະ ອອກຕ່າງປະເທດ ແລະ ການວັດແທກ ໄມ້ກິ່ງງ່າ, ຕໍໄມ້ ແລະ ປູດໄມ້ ເຫັນວ່າຍັງມີ ຊ່ອງຫວ່າງ, ບໍ່ທັນແທດເໝາະ ກັບສະພາບການຕົວຈິງ ແລະ ບາງມາດຕາມີ ລັກສະນະ ສັບສົນ ບໍ່ຈະແຈ້ງ.

ສະນັ້ນ, ເພື່ອປັບປຸງ ຂໍ້ກຳນົດດັ່ງກ່າວ ໃຫ້ມີເນື້ອໃນກະທັດຮັດ, ເຂົ້າໃຈງ່າຍ ແລະ ເປັນເຄື່ອງມືໃນ ການຄຸ້ມຄອງປ່າໄມ້ຢ່າງມີປະສິດທິຜົນ

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ :

## ພາກທີ I

## ການວັດແທກ ແລະ ການຄິດໄລ່ ບໍລິມາດ ໄມ້ທ່ອນ, ຕໍໄມ້ ແລະ ປູດໄມ້

### ໝວດທີ 1

### ການວັດແທກ ແລະ ການຄິດໄລ່ ບໍລິມາດ ໄມ້ທ່ອນ

ມາດຕາ 1. ຂະໜາດໜ້າຕ້າງຂອງໄມ້ທ່ອນ

| ລ/ດ | ຊື່ທ້ອງຖິ່ນ<br>Local name | ຊື່ວິທະຍາສາດ( ຊື່ລາຕິນ )<br>Sientific name | ໜ້າຕ້າງໄມ້ທ່ອນ ( ຊມ )<br>( Ø D ≥ .. .. .. .. ) |
|---|---|---|---|
| I | ໄມ້ຫວງຫ້າມ | | |
| 1. | ໄມ້ຂະຍຸງ | Dalbergia cochinchinensis | 10 |
| 2 | ໄມ້ຄຳພີ ຫຼື ໄມ້ປະດົງ,ໄມ້ດູ່ລາຍ | Dalbergia cultrata | 10 |
| 3. | ໄມ້ໂລ່ງເລ່ງທຳມະດາ | Canninghamia sinensis | 27 |
| 4. | ໄມ້ໂລ່ງເລ່ງໃບຕິນກາບແກ້ | Canninghamia obtusa | 28 |
| 5. | ໄມ້ໂລ່ງເລ່ງໃບຫາງນົກຍຸງ | Canninghamia lanceolata | 28 |
| 6. | ໄມ້ເກັດລີ່ນ | Desmodium lengipes | 21 |
| 7. | ໄມ້ພຸດຜາ | Gradenia Cambodiana Fagraea | 9 |
| 8. | ໄມ້ມັນປາ | fragrans Box | 20 |
| 9. | ໄມ້ຫມູນ | Elaeocarpus sianensis | 16 |
| 10. | ໄມ້ກະຈະ ຫຼືໄມ້ຖ່ານ | Erythropholeum fordii | 18 |
| 11. | ໄມ້ຈຳປາປ່າ | Michelia champaca | 18 |
| 12. | ໄມ້ຂີ້ນຕາຊ້າງ | Dysoxylon loureiri | 20 |
| II. | ໄມ້ພິເສດ | | |
| 1. | ໄມ້ສັກ | Tectona crandis | 20 |
| 2. | ໄມ້ເລ່ນເລ້ | Fokina kawai hajata | 28 |
| 3. | ໄມ້ດູ່ເລືອດ | Pterocarpus macrocarpus | 20 |
| 4. | ໄມ້ດູ່ເຫຼືອງ | Pterocarpus pedatus | 20 |
| 5. | ໄມ້ແຕ້ຂ່າ | Afzelia xylocarpa | 21 |
| 6. | ໄມ້ເກດສະໜາ( ໄມ້ປໍເຫືອງ) | Aquilaris .Sp. | 14 |
| 7. | ໄມ້ສາທອນ | Milletia leocantha | 10 |
| 8. | ໄມ້ຈວງຫອມ | Cinnamomum liseafolium | 16 |
| 9. | ໄມ້ຈັນຫອມ | Mansonia gagei | 14 |
| 10. | ໄມ້ຈັນປ່າ ຫຼືຈັນດົງ | Mansonia . Sp. | 14 |
| 11. | ໄມ້ລາງດຳ | Diospyros embryoteris | 16 |
| 12. | ໄມ້ ຫມາກເກືອ | Diospyros mollis | 10 |
| 13. | ໄມ້ເຫຼັກ | Mesua ferra | 17 |
| 14. | ໄມ້ຮິ້ງຫອມ,ຮິ້ງຊຳ | Fokinia chinensis | 21 |
| 15. | ໄມ້ລີ້ | Gradenia frangeoides | 18 |
| 16. | ໄມ້ຈັນແດງ | Pterocarpus santalinus | 17 |
| 17. | ໄມ້ແດງ | Xylia kerrii | 18 |
| 18. | ໄມ້ແຄນເຮືອ | Hoppea odorata | 22 |
| 19 | ໄມ້ທຳງີວ | Swietenia macrophylla | 17 |
| 20. | ໄມ້ຈຳປີປ່າ | Manglietia insignis | 18 |
| 21. | ໄມ້ເດື່ອຄຳ ( ໄມ້ໄດ ) | Ficus .Sp. | 21 |
| 22. | ໄມ້ແຄຫອມ ( ສະແຄ່ ) | Cinnamomum cassis BL | 20 |
| 23. | ໄມ້ແປກສອງຍອຍ | Pinus merkusii | 21 |
| 24 | ໄມ້ແປກສາມຍອຍ | Pinus Kasiya | 21 |
| . | | | |

| IV. | ໄມ້ຄຸ້ມຄອງ | | |
|---|---|---|---|
| 1. | ໄມ້ແຄນຂະຍອມ | Shorea harmandii | 21 |
| 2. | ໄມ້ແຄນຫີນ | Hopea ferrea | 20 |
| 3. | ໄມ້ຊີຂາວ | Shorea vulgaris | 20 |
| 4. | ໄມ້ຊີດົງ | Vatica Cinerea | 18 |
| 5. | ໄມ້ຊີເປືອກບາງ | Vatica dyeri | 16 |
| 6. | ໄມ້ເປືອຍເລືອດ | Terminalia corticosa | 16 |
| 7. | ໄມ້ເປືອຍຂາວ.ປ.ເປືອກໜາ | Lagerstroemia florribunda | 16 |
| 8. | ໄມ້ເປືອຍໂຄກ | Lagerstroemia cochinchinensis | 16 |
| 9. | ໄມ້ນ້ຳກ້ຽງ | Melanorrhea laccifera | 18 |
| 10. | ໄມ້ແຕ້ໜາມ | Sindora siamensis | 18 |
| 11. | ໄມ້ແຕ້ຮໍ່ | Sindora cochinchinensis | 18 |
| 12. | ໄມ້ມີ້ປ່າ | Artocarpus lancefolius | 21 |
| 13. | ໄມ້ເຊືອກ | Terminalia tomentosa | 16 |
| 14. | ໄມ້ຊາດ | Dipterocarpus obtusifolium | 14 |
| 15. | ໄມ້ຈິກດົງ | Shorea hypochra | 18 |
| 16. | ໄມ້ຈິກໂຄກ | Shorea obtusa | 14 |
| 17. | ໄມ້ຮັງ | Pentacme siamensis | 16 |
| 18. | ໄມ້ແໜ | Terminalia belerica | 18 |
| 19. | ໄມ້ຍາງແດງ | Dipterocarpus costatus | 28 |
| 20. | ໄມ້ຍາງຂາວ | Dipterocarpus alatus | 28 |
| 21. | ໄມ້ຍາງດົງ | Dipterocarpus turbinatus | 28 |
| 22. | ໄມ້ຍາງສະແບງ | Dipterocarpus intricatus | 22 |
| 23. | ໄມ້ມ່ວງປ່າ | Mangifera indica | 20 |
| 24. | ໄມ້ຍົມຫອມ | Toona febrifuga | 19 |
| 25. | ໄມ້ຍົມຫີນ | Chukrasia tabularis | 19 |
| 26. | ໄມ້ຍົມລາຍ | Chukrasia Sp | 19 |
| 27. | ໄມ້ລຽງ | Berrya mollis | 17 |
| 28. | ໄມ້ບາກ | Anisoptera robusta | 28 |
| 29. | ໄມ້ຮາວ | Parashorea sttellata | 22 |
| 30. | ໄມ້ ສີງ | - | 18 |
| 31. | ໄມ້ຂາວ | Adina cordifolia | 22 |
| 32. | ໄມ້ລະແອນ | Hopea pierrei | 20 |
| 33. | ໄມ້ເຕັ່ນ | Duabanga sonneratioides | 22 |
| 34. | ໄມ້ແດງນ້ຳ | Xylia dolariformis | 21 |
| 35. | ໄມ້ຫ້ານ້ຳ | Eugenia SP | 18 |
| 36. | ໄມ້ຝາງແດງ | Caesalpinia sappan | 18 |
| 37. | ໄມ້ແຄນຢ່ອງ ( ແຄນໄຮ່ ) | Shorea sp | 20 |
| 38. | ໄມ້ກວາງແດງ | Dysoxylum binectariferum | 18 |
| 39. | ໄມ້ຍານ | Keteleria tonkinensis | 11 |
| 40. | ໄມ້ຍົມປ່າ ( ຍົມຜາ ) | Ailanthus fauveliana | 19 |
| 41. | ໄມ້ແຄນຝ້າຍ | Vatica astrotricha | 21 |
| 42. | ໄມ້ບານແກ້ວ | - | 18 |